ບົດອອກຂ່າວ ກຳປູເຈຍ-ສປປ ລາວ-ໄທ-ຫວຽດນາມ ອົງການແມ່ນ້ຳຂອງສາກົນ (MRC)

ເພື່ອການພັດທະນາທີ່ຍືນຍົງ

---

ສຳລັບການອອກຂ່າວທັນທີ

# ອົງການແມ່ນ້ຳຂອງສາກົນ (MRC) ສະເຫນີເອົາໂຄງການດອນສາຫົງ ຂຶ້ນປຶກສາຫາລື ໃນກອງປະຊຸມຂັ້ນລັດຖະມົນຕີ

*ນະຄອນຫລວງວຽງຈັນ, ວັນທີ 16 ມັງກອນ 2014* - ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ ໄດ້ຕົກລົງກັນໃນມື້ນີ້ວ່າຈະນຳສະເຫນີຜົນການປຶກສາຫາລື ກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ດອນສາຫົງ ໄປຫາສະພາມົນຕີອົງການແມ່ນ້ຳຂອງສາກົນ MRC ເຊິ່ງເປັນການຈັດຕັ້ງຂັ້ນສູງລະດັບລັດຖະມົນຕີ ທີ່ປະກອບດ້ວຍບັນດາລັດຖະມົນຕີວ່າການດ້ານການຮັກສາແຫລ່ງນ້ຳ ແລະ ສິ່ງແວດລ້ອມຂອງບັນດາປະເທດສະມາຊິກ.

ບັນດາສະມາຊິກຄະນະກຳມະການຮ່ວມຈາກທັງສີ່ປະເທດ ໄດ້ຕົກລົງເປັນເອກະພາບກັນໃນກອງປະຊຸມວາລະພິເສດທີ່ຈັດຂຶ້ນເພື່ອປຶກສາຫາລືກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ດອນສາຫົງ, ເຂດພາກໃຕ້ຂອງ ສປປ ລາວ. ໂດຍໃນວັນທີ່ 30 ກັນຍາ 2013, ລັດຖະບານແຫ່ງ ສປປ ລາວ ໄດ້ແຈ້ງໄປຍັງອົງການແມ່ນ້ຳຂອງສາກົນ MRC ຊາບກ່ຽວກັບການຕັດສິນໃຈ ທີ່ຈະດຳເນີນການພັດທະນາໂຄງການດັ່ງກ່າວ ແລະ ໄດ້ຈັດສົ່ງເອກະສານດັ່ງກ່າວເພື່ອຈຸດປະສົງຂອງການແຈ້ງໃຫ້ຊາບ ເຊິ່ງນອນຢູ່ໃນຂັ້ນຕອນຂອງການແຈ້ງໃຫ້ຊາບ, ການໃຫ້ຄຳປຶກສາລ່ວງຫນ້າ ແລະ ການຕົກລົງ (ຫລື PNPCA) ຂອງ ອົງການແມ່ນ້ຳຂອງສາກົນ MRC. ໃນເບື້ອງຕົ້ນ, ກຳປູເຈຍ, ໄທ ແລະ ຫວຽດນາມ ຖະແຫລງວ່າ: ໂຄງການນີ້ ຕ້ອງໄປຜ່ານຂັ້ນຕອນການໃຫ້ຄຳປຶກສາລ່ວງຫນ້າ. ສຳລັບຂັ້ນຕອນການແຈ້ງໃຫ້ຊາບ ແມ່ນຮຽກຮ້ອງໃຫ້ດຳເນີນການຈັດສົ່ງຂໍ້ມູນທີ່ກ່ຽວຂ້ອງຂອງໂຄງການໃຫ້ແກ່ບັນດາປະເທດທີ່ຖືກແຈ້ງໃຫ້ຊາບນັ້ນ, ແຕ່ສຳລັບຂັ້ນຕອນຂອງການໃຫ້ຄຳປຶກສາລ່ວງຫນ້ານັ້ນ ແມ່ນຮຽກຮ້ອງໃຫ້ມີການໃຫ້ຄຳປຶກສາຢ່າງເປັນທາງການ ແລະ ຕ້ອງມີການປະເມີນຜົນດ້ານວິຊາການນຳອີກ.

ຫລັງຈາກທີ່ໄດ້ປຶກສາຫາລືກັນ ກ່ຽວກັບຂັ້ນຕອນຂອງ PNPCA ນັ້ນ, ກອງປະຊຸມ ບໍ່ສາມາດຕົກລົງເປັນເອກະພາບກັນວ່າ ຈະນຳໃຊ້ຂັ້ນຕອນໃດມາປະຕິບັດ ຕໍ່ກັບໂຄງການດັ່ງກ່າວນີ້ ລະຫວ່າງຂັ້ນຕອນຂອງການແຈ້ງໃຫ້ຊາບ ຫລືຂັ້ນຕອນການໃຫ້ຄຳປຶກສາລ່ວງຫນ້າ.

ໂຄງການດອນສາຫົງ ແມ່ນຢູ່ທີ່ເມືອງໂຂງ, ແຂວງຈຳປາສັກ ຂອງ ສປປ ລາວ ແລະ ກວມເອົາລຳນ້ຳ ຮູສາຫົງເປັນຫນຶ່ງໃນລຳນ້ຳທີ່ເກາະກ່ຽວກັນຂອງສາຂາແມ່ນ້ຳຂອງ ໃນຄວາມຍາວ 5 ກມ ເຊິ່ງລຳນ້ຳດັ່ງກ່າວນີ້ຢູ່ເຫນືອຊາຍແດນລາວ-ກຳປູເຈຍ ປະມານສອງກິໂລແມັດ. ໃນກອງປະຊຸມດັ່ງກ່າວນີ້, ທາງກຳປູເຈຍ, ໄທ ແລະຫວຽດນາມ ຢືນຢັນວ່າໂຄງການດັ່ງກ່າວນີ້ ຕ້ອງດຳເນີນການຕາມຂັ້ນຕອນການໃຫ້ຄຳປຶກສາລ່ວງຫນ້າ. ພວກເຂົາມີຄວາມກັງວົນກ່ຽວກັບຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ ຕໍ່ກັບເສັ້ນທາງການຍ້າຍຖິ່ນຖານຕາມລະດູການຂອງປາ ເພາະວ່າ ຮູສາຫົງ ເປັນລຳນ້ຳທີ່ສຳຄັນຕໍ່ກັບການຍົກຍ້າຍຖິ່ນຖານຂອງປາ ໃນລະດູແລ້ງ. ສປປ ລາວ ຊີ້ແຈງວ່າຍັງມີອີກສອງສາຍນ້ຳຄື: ຮູສາດຳ ແລະ ຮູຊ້າງເຜືອກ ທີ່ສາມາດຖືກນຳໃຊ້ເປັນເສັ້ນທາງໃຫ້ປາ ຍົກຍ້າຍຖິ່ນທົດແທນໃຫ້ແກ່ລຳນ້ຳຮູສາຫົງໄດ້.

ຫົວຫນ້າຄະນະຜູ້ແທນຂອງກຳປູເຈຍ ໄດ້ສະແດງຄວາມເປັນຫ່ວງຕໍ່ກັບຜົນກະທົບທາງດ້ານສິ່ງແວດລ້ອມ ແລະເສດຖະກິດ-ສັງຄົມ ທີ່ຈະເກີດຂຶ້ນໃນທັນທີຕໍ່ກັບເຂດຕ່າງໆຂອງກຳປູເຈຍ ທີ່ຢູ່ລຸ່ມລຳນ້ຳ.

---

ທ່ານ ເຕ ນາວຸດ, ຫົວໜ້າຄະນະຜູ້ແທນກຳປູເຈຍ ກ່າວວ່າ: "ພວກຂ້າພະເຈົ້າ ເຫັນວ່າໂຄງການດັ່ງກ່າວນີ້ ບໍ່ສົມບູນແບບ ແລະ ການສຶກສາຂໍ້ມູນຕ່າງໆ ກໍ່ບໍ່ກວມລວມເອົາບັນຫາຂ້າມແດນຕ່າງໆຢູ່ໃນປະເທດອື່ນ ເຊັ່ນ: ບັນຫາທີ່ຈະເກີດຂຶ້ນຢູ່ກຳປູເຈຍ". ທ່ານ ຍັງໄດ້ກ່າວຕື່ມອີກວ່າ: "ຖ້າວ່າລຳນ້ຳສາຍອື່ນທີ່ມາທົດແທນ (ສຳລັບການຍົກຍ້າຍຖິ່ນຖານຂອງປາ) ຫາກບໍ່ເປັນໄປຕາມການທີ່ຄາດຄະເນໄວ້ນັ້ນ, ເຂື່ອນດັ່ງກ່າວ ຈະສົ່ງຜົນກະທົບເຖິງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການຂອງກຳປູເຈຍ".

ປະເທດໄທ ກໍ່ສະແດງທັດສະນະແບບດຽວກັນ ດ້ວຍການສະແດງຄວາມເປັນຫ່ວງຕໍ່ກັບຄວາມອາດສາມາດໃນການດຳເນີນງານຂອງສາຍນ້ຳສາຍອື່ນທີ່ມາທົດແທນ ແລະ ຮຽກຮ້ອງໃຫ້ຂໍຄຳປຶກສາຈາກບັນດາປະເທດສະມາຊິກຕື່ມອີກ ເພື່ອຄວາມກະຈ່າງແຈ້ງຕໍ່ກັບບັນຫາດັ່ງກ່າວ ແລະ ບັນຫາອື່ນໆ ກ່ອນທີ່ໂຄງການດັ່ງກ່າວ ຈະຖືກຈັດຕັ້ງປະຕິບັດ.

ຄະນະຜູ້ແທນຂອງໄທ ກ່າວວ່າ: "ຝ່າຍໄທ ຂໍແນະນຳວ່າ ໂຄງການດັ່ງກ່າວນີ້ ຕ້ອງໄດ້ຈັດຕັ້ງໃຫ້ມີການໃຫ້ຄຳປຶກສາກັນຕື່ມ ເພື່ອໃຫ້ມີການປຶກສາຫາລືກັນ ລະຫວ່າງຜູ້ຖືຫຸ້ນ ແລະ ຝ່າຍຕ່າງໆທີ່ກ່ຽວຂ້ອງ".

ຄະນະຜູ້ແທນ ຫວຽດນາມ ກໍ່ມີທັດສະນະທີ່ເປັນຫ່ວງ ຕໍ່ກັບຜົນກະທົບທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ລວມທັງການປ່ຽນແປງຂອງກະແສນ້ຳ ແລະ ການຕົກຕະກອນ.

ທ່ານ ດຣ. ເລ ດຶກ ຈຸງ, ຫົວໜ້າຄະນະຜູ້ແທນ ຫວຽດນາມ ກ່າວວ່າ: "ພວກຂ້າພະເຈົ້າ ໃຫ້ທັດສະນະວ່າ ມັນຈະສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ກັບການປະມົງ. ຍົກຕົວຢ່າງ: ລຳນ້ຳທີ່ປັບປຸງໃໝ່ສຳລັບການຍົກຍ້າຍຖິ່ນຖານຂອງປາຢູ່ຕົ້ນລຳນ້ຳ ອາດບໍ່ສາມາດທົດແທນລຳນ້ຳ ຮູສາຫົງ ໃນປະຈຸບັນໄດ້. ດັ່ງນັ້ນ, ຈຶ່ງຕ້ອງໄດ້ດຳເນີນການສຶກສາ ກ່ຽວກັບຜົນກະທົບທາງດ້ານສັງຄົມ ທີ່ເກີດຈາກການສູນເສຍທາງການປະມົງ".

ແຕ່ວ່າ ຄະນະຜູ້ແທນຂອງ ສປປ ລາວ ຍັງຢືນຢັນ ແລະ ກ່າວວ່າຂັ້ນຕອນຂອງການແຈ້ງໃຫ້ຊາບ ແມ່ນຂັ້ນຕອນທີ່ເໝາະສົມແລ້ວ ໃນການແຈ້ງໃຫ້ແກ່ປະເທດອື່ນໆຮັບຮູ້ ກ່ຽວກັບໂຄງການດັ່ງກ່າວນີ້ ເຊິ່ງພວກເຂົາ ກ່າວວ່າ ເຂື່ອນດັ່ງກ່າວ ບໍ່ແມ່ນເຂື່ອນໄຟຟ້າທີ່ຢູ່ຕາມລຳແມ່ນ້ຳຂອງ ແລະ ສາຂາຂອງມັນ. ຝ່າຍ ລາວ ກ່າວຕື່ມວ່າ: ໂຄງການດັ່ງກ່າວນີ້ ຈະນຳໃຊ້ພຽງແຕ່ 15% ຂອງກະແສແມ່ນ້ຳຂອງ ແລະ ຈະບໍ່ສົ່ງຜົນກະທົບຫຍັງຕໍ່ກັບການໄຫລວຽນຂອງແມ່ນ້ຳຂອງ.

ທ່ານ ດຣ. ດາວວົງ ພອນແກ້ວ, ຫົວໜ້າຄະນະຜູ້ແທນ ສປປ ລາວ ກ່າວວ່າ: "ຮູສາຫົງ ແມ່ນລຳນ້ຳຕົ້ນຕໍຂອງການຍົກຍ້າຍຖິ່ນຖານໃນລະດູແລ້ງ, ແຕ່ວ່າໃນຄວາມເປັນຈິງນັ້ນ ຍັງມີອີກຫລາຍລຳນ້ຳ ທີ່ເອື້ອອຳນວຍຕໍ່ກັບການຍ້າຍຖິ່ນຖານຂອງປາໃນລະດູຝົນ ແລະ ຜົນການຄົ້ນຄວ້າ ກໍ່ໄດ້ສະແດງໃຫ້ເຫັນວ່າ: ລຳນ້ຳອື່ນ ກໍ່ສາມາດຖືກປັບປຸງ ເພື່ອປັບປຸງການຍົກຍ້າຍຖິ່ນຖານຂອງປາ ໃຫ້ດີຂຶ້ນ ເພື່ອໃຫ້ໃຊ້ໄດ້ທັງສອງຊ່ອງທາງໃນຕະຫລອດປີ". ທ່ານ ຍັງກ່າວຕື່ມອີກວ່າ: "ສປປ ລາວ ໄດ້ດຳເນີນການຢ່າງໂປ່ງໃສ ແລະ ເຮັດທຸກສິ່ງທຸກຢ່າງທີ່ກຳນົດໄວ້ພາຍໃຕ້ຂັ້ນຕອນຕ່າງໆຂອງສັນຍາແມ່ນ້ຳຂອງສະບັບປີ 1995".

ກອງປະຊຸມວາລະພິເສດຂອງຄະນະກຳມາທິການຮ່ວມໃນມື້ນີ້ ໄດ້ເຕົ້າໂຮມເອົາບັນດາສະມາຊິກຂອງ JC, ເຈົ້າໜ້າທີ່ອາວຸໂສຈາກປະເທດສະມາຊິກທັງສີ່ປະເທດ ແລະ ສະມາຊິກອາວຸໂສຂອງກອງເລຂາ MRC.

ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບໂຄງການດອນສາຫົງ ແລະ ເອກະສານແຈ້ງໃຫ້ຊາບຂອງ ສປປ ລາວ, ກະລຸນາເຂົ້າໄປເບິ່ງໄດ້ທີ່: http://www.mrcmekong.org/news-and-events/news/lao-pdr-submits-notification-on-don-sahong-hydropower-project/

# ບົດອອກຂ່າວ

ກຳປູເຈຍ-ສປປ ລາວ-ໄທ-ຫວຽດນາມ

ເພື່ອການພັດທະນາທີ່ຍືນຍົງ

ອົງການແມ່ນ້ຳຂອງສາກົນ (MRC)

---

**ໝາຍເຫດຈາກບັນນາທິການ:**

MRC ເປັນອົງການສາກົນ ທີ່ຮັບຜິດຊອບກ່ຽວກັບການຮ່ວມມື ເພື່ອຄຸ້ມຄອງອ່າງແມ່ນ້ຳຂອງໃຫ້ມີຄວາມຍືນຍົງ ເຊິ່ງປະເທດສະມາຊິກປະກອບດ້ວຍກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ. ຄະນະກຳມາທິການດັ່ງກ່າວນີ້ ຖືກສ້າງຕັ້ງຂຶ້ນມາ ເພື່ອສົ່ງເສີມການຮ່ວມມືກັນ ລະຫວ່າງບັນດາປະເທດສະມາຊິກ ແລະ ຄະນະກຳມາທິການດັ່ງກ່າວນີ້ ບໍ່ແມ່ນອົງການທີ່ອອກລະບຽບການ ຫລື ອົງການຂ້າມຊາດໃດໜຶ່ງ.

ເພື່ອກ້າວຂ້າມສິ່ງທ້າທາຍດັ່ງກ່າວນີ້, ຄະນະກຳມາທິການ ໄດ້ພິຈາລະນາເຖິງທຸກຂົງເຂດ ລວມມີການປະມົງແບບຍືນຍົງ, ການກຳນົດກາລະໂອກາດດ້ານກະສິກຳ, ການເກັບຮັກສາສິດເສລີພາບຂອງການພາຫາງ, ການຄຸ້ມຄອງໄພນ້ຳຖ້ວມ ແລະ ການອະນຸລັກລະບົບນິເວດທີ່ສຳຄັນຕ່າງໆ. ນອກຈາກນີ້, ຍັງຄຳນຶງເຖິງບັນດາຜົນກະທົບໃນອະນາຄົດ ທີ່ອາດເກີດໄພນ້ຳຖ້ວມທີ່ຮຸນແຮງກວ່າເກົ່າ, ໄພແຫ້ງແລ້ງທີ່ແກ່ຍາວເວລາອອກໄປ ແລະ ລະດັບນ້ຳທະເລ ທີ່ເພີ່ມສູງຂຶ້ນ ເນື່ອງຈາກການປ່ຽນແປງຂອງສະພາບອາກາດ. ໃນການໃຫ້ຄຳແນະນຳນັ້ນ, ທາງອົງການແມ່ນ້ຳຂອງສາກົນ MRC ແມ່ໃສ່ອຳນວຍຄວາມສະດວກໃຫ້ແກ່ການເຈລະຈາກັນໃນວົງກວ້າງ ລະຫວ່າງພາກລັດ, ເອກະຊົນ ແລະ ອົງການສັງຄົມຕ່າງໆ.

ກອງເລຂາ MRC ໄດ້ສະໜອງການບໍລິການດ້ານວຽກງານບໍລິຫານ, ການໃຫ້ຄຳປຶກສາ ແລະ ດ້ານເຕັກນິກ ແກ່ບັນດາປະເທດສະມາຊິກ. ກອງເລຂາ ຍັງອຳນວຍຄວາມສະດວກໃນການຈັດກອງປະຊຸມລະດັບພາກພື້ນ ໃຫ້ແກ່ບັນດາປະເທດສະມາຊິກ ແລະ ໃຫ້ຄຳປຶກສາດ້ານເຕັກນິກ ກ່ຽວກັບການວາງແຜນຮ່ວມກັນ, ການປະສານງານ ແລະ ການຮ່ວມມືກັນ. ທາງກອງເລຂາ ຍັງເຮັດວຽກຢ່າງໃກ້ຊິດກັບບັນດາອົງການຜູ້ປະສານງານຈາກສີ່ປະເທດສະມາຊິກ ເຊັ່ນ: ຄະນະກຳມາທິການແມ່ນ້ຳຂອງແຫ່ງຊາດ (NMCs) ແລະ ໜ່ວຍງານອື່ນໆຈາກປະເທດສະມາຊິກ. ປະຈຸບັນນີ້, ປະເທດ ສາທາລະນະລັດ ປະຊາຊົນ ຈີນ ແລະ ສະຫະພາບ ມຽນມາ ກໍ່ໄດ້ເຂົ້າເປັນຄູ່ຮ່ວມເຈລະຈາກັບ ອົງການແມ່ນ້ຳຂອງສາກົນ MRC ແລ້ວ.

ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ທ່ານ ສຸລະສັກ ກ້າຫານ, ພະນັກງານຕິດຕໍ່ສື່ສານ, ສຳນັກງານກອງເລຂາ ຢູ່ນະຄອນຫລວງວຽງຈັນ
ໂທ: +856 20 555 28726
ອີເມວ: Surasak@mrcmekong.org